# ຄວາມສຳຄັນຂອງໜ້າກາກຜ້າ

ເວລາທ່ານຢູ່ລອບຂ້າງຄົນອື່ນໆ ຢູ່ສະຖານທີ່ສາທາລະນະ, ທຸກເທື່ອທີ່ຄົນອື່ນເວົ້າ, ໄອ, ຫຼືຈາມ, ເມັດນ້ຳຈາກປາກຄົນນັ້ນຈະກະຈາຍສູ່ອາກາດ ເຊິ່ງເປັນລົມຫາຍໃຈຂອງທ່ານ. ເມັດນ້ຳເຫຼົ່ານີ້ອາດຈະມີເຊື້ອໂລກທີ່ເຮົາບໍ່ຮູ້ຈັກຕິດຕາມມານຳໂດຍບໍ່ຮູ້ເນື້ອເລີຍ. ເພາະສະນັ້ນ ເວລາພວກເຮົາອອກໄປຂ້າງນອກຢູ່ສະຖານທີ່ສາທາລະນະ, ສຳຄັນທີ່ຈະຢູ່ຫ່າງໆ ຈາກຄົນອື່ນ ແລະໃສ່ໜ້າກາກ, ເຊິ່ງຈະປ້ອງກັນທ່ານ ແລະທຸກຄົນອ້ອມຂ້າງທ່ານຈາກການເຜີຍແຜ່ສິ່ງຢ່າງທີ່ອາດຈະເປັນອັນຕະລາຍ. ນີ້ຈະຊ່ວຍຢັບຢັ້ງການແຜ່ລະບາດເຊື້ອໂລກ ໂຄວິດ 19. ໃຫ້ເຮັດຕາມຄຳແນະນຳດັ່ງກ່າວນີ້ສຳລັບການໃສ່ແລະການຮັກສາໜ້າກາກຜ້າຂອງທ່ານ.

## ✓ ໃຫ້ເຮັດ





- ✓ ໃຫ້ໃຊ້ມືທີ່ສະອາດຕອນໃສ່ໜ້າກາກຂອງທ່ານ.
- ✓ ໃສ່ໜ້າກາກໃຫ້ປິດບັງດັງ, ປາກ, ແລະຄາງຂອງທ່ານ.
- ✓ ໃຫ້ໜ້າກາກປົດບັງໜ້າທັງສອງຂ້າງແລະເກາະສາຍຮັດເບື້ອງຫຼັງຫູໃຫ້ໝັ້ນຄົງ.
- ✓ ໃຫ້ແນ່ໃຈວ່າທ່ານສາມາດຫາຍໃຈໄດ້ສະດວກສະບາຍ.
- ✓ ລ້າງມືຂອງທ່ານທຸກຄັ້ງຫຼັງຈາກຖອດໜ້າກາກອອກແລ້ວ.
- ✓ ໃຫ້ໝັ່ນຊັກລ້າງໜ້າກາກຂອງທ່ານຫຼັງຈາກໃຊ້ແລ້ວທຸກຄັ້ງ.

## ✗ ຫ້າມເຮັດ



- ✗ ຫ້າມໃສ່ໜ້າກາກເທິງໃບໜ້າບ່ອນທີ່ບໍ່ປິດບັງດັງ, ປາກ ແລະຄາງຂອງທ່ານ.
- ✗ ຫ້າມຈັບບາຍຫຼືຂະຫຍັບໜ້າກາກຖ້າບໍ່ທັນລ້າງຫຼືທຳຄວາມສະອາດມືກ່ອນ.
- ✗ ຫ້າມເອົາໜ້າກາກໃສ່ໜ້າເດັກນ້ອຍອາຍຸຕ່ຳກວ່າ 2 ປີ ຫຼືບຸກຄົນທີ່ບໍ່ສາມາດຫາຍໃຈຫຼື ຖອດໜ້າກາກອອກດ້ວຍແຮງຕົນເອງໄດ້.